## ປະສົບການ ໃນການສຳພັດ ສະເໜ່ ຂອງພາກພື້ນ ໂຮກູຣິກຸ (Hokuriku)

ຂ້ອຍໄດ້ມີໂອກາດໄດ້ໄປສຶກສາ ແລະ ທ່ອງທ່ຽວໃນໄລຍະ 4 ມື້ຂອງພວກເຮົາໃນຂົງເຂດໂຮກຸຣິກຸ (Hokuriku) ຍີ່ປຸ່ນ ແມ່ນປະສົບການທີ່ຫຼາກຫຼາຍ ແລະ ມີຄວາມໝາຍຢ່າງຫຼວງຫຼາຍ, ໃນວັນທຳອິດ ພວກເຮົາໄດ້ໄປຢ້ຽມຢາມສະຖານທີ່ປະຫວັດສາດຂອງສານເຈົ້າ Heisenji Hakusan Shrine, ໃນວັນທີສອງ ພວກເຮົາໄດ້ໄປເບິ່ງສ່ວນສາທາລະນະ Yunokuni no Mori ແລະ ເມືອງ Kanazawa, ໃນວັນທີສາມ ພວກເຮົາໄດ້ໄປຮ່ວມກິດຈະກຳເຮັດຫູ່ໂລຫະແບບດັ້ງເດີມ ແລະ ໃນວັນສຸດທ້າຍ ພວກເຮົາໄດ້ໄປຢ້ຽມຊົມເມືອງ Gujo (Tokai, Gifu) ເພື່ອຢ້ຽມຊົມທຳມະຊາດ ແລະ ຈູດຊົມທິວທັດທີ່ສວຍງາມ.

### ວັນທີ 1: ໄປທ່ຽວຊົມ ພະອາຣາມ ເຮັນເຊັນຈິ ຮາກຸຊານ (Heisenji Hakusan)



**ທຳມະຊາດ ທີ່ສວຍສົດງົດງາມໃນປ່າລຶກ ຂອງພະອາຣາມ Heisenji Hakusan**

ພະອາຣາມ ເຮັນເຊັນຈິ ຮາກຸຊານ (Heisenji Hakusan) ແມ່ນພະອາຣາມຊິນໂຕໂບຮານທີ່ມີປະຫວັດສາດຍາວນານຫຼາຍກວ່າ 1,300 ປີ ຕັ້ງຢູ່ທາງເໜືອຂອງປະເທດຍີ່ປຸ່ນ. ຖືກກໍ່ສ້າງໃນປີ 717 ໂດຍພະພິກໄທສຸ (Taichō) ເພື່ອໃຊ້ເປັນປະຕູເຂົ້າສູ່ ພູຮາກຸຊານ Hakusan - ພູສັກສິດທີ່ໄດ້ຮັບການນັບຖືມາຕັ້ງແຕ່ບູຮານ ທັງໃນພຸດທະສາສະໜາຊິນໂຕ, ໃນອະດີດວັດແຫ່ງນີ້ເຄີຍເປັນສູນກາງທາງຈິດວິນຍານ ແລະ ການທະຫານ ມີນັກສົງ, ນັກຮົບຫຼາຍກວ່າ 8,000 ຮູບ ແລະ ເຄີຍເປັນສ່ວນໜຶ່ງຂອງຊຸມຊົນ ຊຸເຈນດູ (Shugendō) ທີ່ໄດ້ປະສົມປະສານປະເພນີຂອງສອງສາສະໜາເຂົ້າດ້ວຍກັນ. ແຕ່ຕໍ່ມາຖືກທຳລາຍລົງໃນຊ່ວງຍຸກຂອງເຊັນໂຈກຸ (Sengoku) ເນື່ອງຈາກສົງຄາມ. ຄວາມໂດ່ນເດັ່ນຂອງສະຖານທີ່ແຫ່ງນີ້ ຄືທາງປູດ້ວຍຫີນ ແລະ ພື້ນດິນທີ່ປົກຄຸມໄປດ້ວຍຂີ້ໄມ້ຊຽງຕາມຂອບຂຽວ, ບັນຍາກາດທີ່ເປັນທຳມະຊາດລຶກລັບ ແລະ ສະງົບສຸກລ້ອມຮອບດ້ວຍຕົ້ນໄມ້ສູງໆ ແລະ ເມກຫນາໃນບາງວັນເປັນສະຖານທີ່ທ່ອງທ່ອງທີ່ມີຈຸດຖ່າຍຮູບທີ່ນິຍົມຫຼາຍ ໂດຍສະເພາະໃນລະດູຝົນ ເປັນຄັ້ງແລກທີ່ຂ້ອຍໄດ້ມາເຫັນ ຮູ້ສຶກວ່າສົດຊື່ນ ດ້ວຍພືນປ່າທຳມະຊາດ ແລະ ຫຼົງຮັກກິນອາຍທຳມະຊາດ ແຕ່ຂໍແນະນຳວ່າຖ້າຈະມາທ່ອງທ່ຽວໃນລະດູຝົນຄວນ ມີຄັນຮົ່ມ, ສວມເສື້ອຜ້າສຸດເບົາ ແລະ ເກີບທີ່ກັນນ້ຳໄດ້ ເພື່ອສະດວກໃນການຍ່າງທ່ຽວຊົມສະຖານທີ່ແຫ່ງນີ້.

**ມື້ທີ2: ໄປຢ້ຽມຊົມ ຢູໂນະກຸນິ ໂນະໂມຣິ (Yunokuni – no mori)**



**ລະດູຝົນ ແລະ ກິດຈະກຳ ການແປະແຜ່ນທອງຄຳເປວ**

**ຄັນຮົ່ມລອຍຟ້າ ແລະ ກິດຈະກຳ ການແປະແຜ່ນທອງຄຳເປວ**

ສະຖານທີ່ດັ່ງກ່າວ ແມ່ນຢູ່ທາງຂຶ້ນ ຂອງຢູໂນຄູນິ ໂນໂມຣິ ຕັ້ງຢູ່ພື້ນທີ່ບໍ່ນໍ້າພູຮ້ອນ ຄາງະ ເປັນສະຖານທີ່ ທີ່ສ້າງຂຶ້ນດ້ວຍການອອກແບບ ແລະ ການຕົບແຕ່ງ ເອົາຄັນຮົ່ມຫຼາກຫຼາຍສີສັນ ມັດແຂນລອຍຟ້າ ດ້ວຍສີສັນສົດໃສ ໂດຍສະເພາະເປັນການຕົບແຕ່ງໃສ່ລະດູໜ້າຮ້ອນ ແລະ ໜ້າຝົນ ເໝາະແກ່ການຢຸດຖ່າຍຮູບພາບ, ນອກຈາກນັ້ນ ທາງຂ້າງຂອບທາງຍ່າງຈະເປັນຄອງນໍ້າຂະໜາດນ້ອຍທີ່ໃສສະອາດເໝາະແກ່ການຍ່າງຊົມທິວທັດ, ນອກຈາກນັ້ນ ພື້ນທີ່ດັ່ງກ່າວ ນອກຈາກຈະມີການຕົບແຕ່ງແມ່ຄອງນໍ້າດ້ວຍທຸງສີແດງແລ້ວຍັງມີບັນໄດໄຕຂຶ້ນຊົມວິວ ແລະ ມີດອກຢືນຈິ ເຊິ່ງເປັນດອກໄມ້ທີ່ບານໃນລະດູຝົນ, ນອກຈາກນີ້ ໃນພື້ນທີ່ດັ່ງກ່າວ ຍັງມີກິດຈະກຳທີ່ສ້າງຄວາມດຶງດູດໃຈໃຫ້ແກ່ນັກທ່ອງທ່ຽວເປັນຕົ້ນແມ່ນການທົດລອງເພັ້ນຈານ ດ້ວຍການແປະຝຸ່ນເປວທອງຄຳ ແລະ ການເພັ້ນແກ້ວຄິສຕໍຕ່າງໆ ເພື່ອເພີ່ມສີສັນ ແລະ ສ້າງຄວາມດຶງດູດໃຈໃຫ້ແກ່ນັກທ່ອງທ່ຽວທີ່ເຂົ້າມາທ່ຽວຊົມ.



**ນໍ້າຕົກແຫ່ງນີ້ຖືກອ້ອມຮອບໄປດ້ວຍທິວທັດທຳມະຊາດອັນງົດງາມ ໃນສວນ ເຄນໂຣເກິນ Kenrokuen**

**ຄວາມງາມຂອງທິວທັດ ແລະ ບັນຍາກາດທີ່ເຢັນສະບາຍໃນສວນ ເຄນໂຣເກິນ Kenrokuen**

ສະນໍ້າ ກາສູມິກາອິ (**Kasumigaik**) ເປັນສະນໍ້າໃຫຍ່ທີ່ຕັ້ງຢູ່ກາງສວນ ແລະ ເປັນສະຖານທີ່ທ່ອງທ່ຽວທີ່ງົດງາມ ຖືກອ້ອມຮອບໄປດ້ວຍທຳມະຊາດເຊັ່ນ: ຕົ້ນໄມ້ອອກໄມ້ນາໆພັນ ແລະ ມີສະພານຂ້າມນໍ້າ ເຮັດໃຫ້ບ່ອນນີ້ເປັນຈຸດຖ່າຍຮູບຍອດນິຍົມຂອງນັກທ່ອງ

ທ່ຽວ. ນອກຈາກນັ້ນຍັງມີຈຸດຊົມວິວທີ່ສວຍງາມອີກຫຼາຍບ່ອນຢ່າງເຊັ່ນ: ວັດໂກໂມໂກສິຈິ (Komokochiji), ຕົ້ນສົນ (Karasaki), ພູເຂົາ ຈາສາຢາມ່າ (Chasayama) ແລະ ໜ້າຜາ ໂອຢາຊິຣາສຸ (Oyashirazu) ທີ່ລ້ອມແຕ່ເພີ່ມສີສັນໃຫ້ສະຖານທີ່ແຫ່ງນີ້. ຈຸດຊົມທິວທັດເຫຼົ່ານີ້ຊ່ວຍໃຫ້ນັກທ່ອງທ່ຽວສາມາດຍ່າງຫຼິ້ນຢ່າງສະບາຍ ພ້ອມກັບຊົມທໍາມະຊາດອັນສວຍງາມ ທີ່ອ້ອມຮອບ, ສວນ ໂຮໄລ Horai ເມື່ອເບິ່ງຈາກມຸມໜຶ່ງ ຈະເຫັນຄືຮູບຫ່າງຂອງເຕົ່າ ລະດູຮູບຂອງຕົ້ນສົນທີ່ຖືກຕັດໃຫ້ເປັນຄ້າຍຄືຮູບນົກກະຣຽງກາງກະພີກປີກບິນ ເຊິ່ງເປັນສັນຍາລັກແຫ່ງໂຊກລາບ ແລະ ຄວາມຍືນຍາວ.



ຂຽນໂດຍ: ນາງ ລານີ ສາຍວົງວານ
ຂ້ອຍເຮັດວຽກຢູ່ ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ, ກະຊວງອຸດສາຫະກໍາ ແລະ ການຄ້າ
ໜ້າທີ່ຮັບຜິດຊອບ ວຽກງານວາງສະແດງ ພາຍໃນ ແລະ ຕ່າງປະເທດ
ເວລາຫວ່າງ ຂ້ອງມັກໄປອອກກໍາລັງກາຍ ແລະ ຟັງເພງ